**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງໄຊຍະບູລີ
ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 3126 /ກສຂ
ໄຊຍະບູລີ, ວັນທີ 16 ມິຖຸນາ 2026

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ສັນຍາເງິນກູ້ຢືມເລກທີ: ADB Loan 3817-LAO, ສັນຍາເງິນຊ່ວຍເຫຼືອລ້າເລກທີ: ADB Grant 0659-LAO (SF), ສັນຍາເງິນຊ່ວຍເຫຼືອລ້າເລກທີ: EU Grant 0660-LAO (EF) ແລະ ສັນຍາເງິນຊ່ວຍເຫຼືອລ້າ ເລກທີ: GAFSP Grant 0912-LAO (EF).

**ຊື່ພູດການປະມູນ/ສັນຍາ**: ກໍ່ສ້າງ - ສ້ອມແປງຊົນລະປະທານນ້ຳຍາງ 3 ເມືອງປາກລາຍ ແຂວງໄຊຍະບູລີ.
**ເລກທີອ້າງອີງ**: **OP3-CW19**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທຶນຈາກທະນາຄານພັດທະນາອາຊີເພື່ອໃຊ້ຈ່າຍສຳລັບໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (SRIWSM) ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາກໍ່ສ້າງ - ສ້ອມແປງຊົນລະ ປະທານນ້ຳຍາງ 3 ເມືອງປາກລາຍ ແຂວງໄຊຍະບູລີ (ສັນຍາເລກທີ: OP3-CW19).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງໄຊຍະບູລີ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນ ສຳລັບຟື້ນຟູສ້ອມແປງລະບົບຄອງເໝືອງຊົນລະປະທານຊົນລະປະທານນ້ຳຍາງ 3 ເມືອງປາກລາຍ ແຂວງໄຊຍະບູລີ (ສັນຍາເລກທີ: OP3-CW19), ໄລຍະກໍ່ສ້າງ 18 ເດືອນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ໂດຍປະກາດຜ່ານສື່ພາຍໃນປະເທດຕາມທີ່ໄດ້ລະບຸໄວ້ໃນນະໂຍບາຍ ແລະ ລະບຽບການຈັດຊື້-ຈັດຈ້າງ ຂອງທະນາຄານພັດທະນາອາຊີ (ປີ 2017 ແລະ ສະບັບທີ່ປັບປຸງເປັນໄລຍະ) ແລະ ເປີດໃຫ້ທຸກໆຜູ້ປະມູນທີ່ມີຄວາມເໝາະສົມ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນເອກະສານປະມູນ.
4. ຜູ້ປະມູນສາມາດເບິ່ງເງື່ອນໄຂຄວາມເໝາະສົມ ແລະ ດ້ານຄຸນນະວຸທິ ໃນເອກະສານປະມູນ.
    - ລາຍຮັບສະເລ່ຍຈາກການກໍ່ສ້າງ: ຢ່າງໜ້ອຍ 1,900,000 ໂດລາສະຫະລັດ ຕາມທີ່ກຳນົດໃນເອກະສານປະມູນ, ຄິດໄລ່ເປັນການຈ່າຍເງິນທີ່ໄດ້ຮັບການຮັບຮອງທັງໝົດທີ່ໄດ້ຮັບສຳລັບສັນຍາທີ່ສຳເລັດ ຫຼື ກຳລັງດຳເນີນຢູ່ ໃນໄລຍະ 3 ປີລ່າສຸດ (2023 - 2025).ຖ້າເປັນຜູ້ປະມູນທຸລະກິດຮ່ວມ ທຸກໆພາກສ່ວນຮ່ວມກັນ ຕ້ອງຜ່ານເງື່ອນໄຂ 100%.
    - ປະສົບການ: ຢ່າງໜ້ອຍ 01 ໂຄງການກໍ່ສ້າງຂອງສັນຍາທີ່ຄ້າຍຄືກັນ ທີ່ເຊັນສັນຍາ ແລະ ສຳເລັດໄປແລ້ວເປັນສ່ວນໃຫຍ່ໃນນາມເປັນຜູ້ຮັບເໝົາຫຼັກ, ສະມາຊິກຂອງບໍລິສັດຮ່ວມທຸລະກິດ ຫຼື ຜູ້ຮັບເໝົາຊ່ວງຕໍ່ ນັບ

ຕັ້ງແຕ່ວັນທີ 01 ມັງກອນ 2021 ແລະ ກຳນົດວັນຍື່ນຊອງປະມູນ, ມີມູນຄ່າສັນຍາຢ່າງໜ້ອຍ 1,600,000 ໂດລາສະຫະລັດ.

- ເງື່ອນໄຂອື່ນໆແມ່ນກຳນົດໃນ ເອກະສານປະມູນ.

5. ຜູ້ປະມູນທີ່ມີຄວາມເໝາະສົມສາມາດພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ ຢູ່ທີ່ຢູ່ຂ້າງລຸ່ມໃນໂມງລັດຖະການ. ໃນກໍລະນີທີ່ພົບຄວາມຫຍຸ້ງຍາກໃນການພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ, ຜູ້ປະມູນ ສາມາດສອບຖາມຜ່ານທາງ ອີເມລ: keomany787@gmai.com.
ຜູ້ປະມູນທີ່ມີຄວາມເໝາະສົມ ແລະ ສົນໃຈ ສາມາດຍື່ນໜັງສືສະເໜີຊື້ເອກະສານປະມູນຄົບຊຸດເປັນພາສາລາວ, ໃນມູນຄ່າ 100 ໂດລາສະຫະລັດ ດ້ວຍການຈ່າຍເປັນເງິນສົດ ຫຼື ໂອນເຂົ້າບັນຊີໂຄງການ ພຊດ: ເລກທີບັນຊີ 120-11-010-182630-001. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນສາຂາແຂວງໄຊຍະບູລີ.
6. ຊອງປະມູນຈະຕ້ອງສົ່ງ ໃນວັນທີ ຫຼື ກ່ອນມື້ເປີດຊອງ ວັນທີ 28 ກໍລະກົດ 2026 ເວລາ 09 ໂມງ 00 ນາທີ ທີ່ຫ້ອງປະຊຸມໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ; ພະແນກກະສິ ກຳ ແລະ ສິ່ງແວດລ້ອມ ແຂວງໄຊຍະບູລີ. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະໂດຍຊ້ອງໜ້າ ຄະນະກຳມະການ ຈັດຊື້-ຈັດຈ້າງ, ຕົວແທນຂອງຜູ້ ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນທີ່ມີຄວາມສົນໃຈ ຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.
7. ເອກະສານຈະຕ້ອງປະກອບໜັງສື " ການຄ້ຳປະກັນການປະມູນດ້ວຍກຽດ ".
8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງເທິງນີ້ແມ່ນ:
ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງໄຊຍະບູລີ, ຫ້ອງປະຊຸມໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ; ບ້ານນາໄຊ, ເມືອງ ໄຊຍະບູລີ ແຂວງໄຊຍະບູລີ, ສປປລາວ.
ເບີໂທລະສັບ +856 20 22894460
ອີເມລ: keomany787@gmai.com

ຫົວໜ້າພະແນກ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງໄຊຍະບູລີ

ປອ. ສົມພັນ ແພງສິດາ
PhD. Somphanh PHENGSIDA